ກະຊວງກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

# ບົດລາຍງານວິຊາການ
# ການປູກພືດປະສົມປະສານຄົງທີ່ ໃນເຂດດິນຄ້ອຍຊັນ
# ທີ່ ບ້ານ ຫ້ວຍມະຫາ ເມືອງ ໂພນໄຊ ແຂວງ ຫຼວງພະບາງ





ໂດຍ: ສົມພະຈັນ ວົງພະສຸວັນ

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້

ໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ເຂດພູດອຍຮ່ວມມື ລາວ-ຊູແອດ

(ມັງກອນ, 2007)

## I. ຄວາມເປັນມາ:

ວິທີການແກ້ໄຂບັນຫາກ່ຽວກັບການຫຼຸດຜ່ອນຄວາມທຸກຈົນ ຂອງ ປະຊາຊົນບັນດາເຜົ່າໃນເຂດພູດອຍ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ແມ່ນການພັດທະນາລະບົບການຜະລິດກະສິກຳແບບຮອບດ້ານ ແລະ ປະສົມປະສານລະຫວ່າງກະສິກຳ ແລະ ປ່າໄມ້ ໂດຍຜ່ານການຄົ້ນຄ້ວາທົດລອງ ແລະ ການສາທິດຕົວຈິງໃນພື້ນທີ່ຂອງປະຊາຊົນຢ່າງຄັກແນ່ ແລະ ມີການຄຸ້ມຄອງນຳໃຊ້ດິນແບບຍືນຍົງ ດ້ວຍວິທີການຕ້ານການເຊາະເຈື່ອນ, ການປູກປ່າແລະປົກປັກຮັກສາ. (ກະຊວງກະສິກຳປ່າໄມ້ 1999).

ໃນໂຊງເຂດພື້ນທີ່ຊຶ່ງມີໂຄງການ ທີ່ມີລັກຊະນະກ່ຽວກັບການພັດທະນາລະບົບການຜະລິດກະສິກຳ ແລະປ່າໄມ້ ແນໃສ່ອະນຸລັກຮັກສາຊັບພະຍາກອນດິນ ນ້ຳ ແລະ ປ່າໄມ້ ນັ້ນ ມັກຈະມີການແນະນຳຮູບແບບ ການຜະລິດກະ ສິກຳໃນເຂດດິນຄ້ອຍຊັນກັນຢູ່ແລ້ວ ແຕ່ສ່ວນໃຫຍ່ ບັນດາຮູບແບບນັ້ນ ບໍ່ໄດ້ຖືກນຳໃຊ້ຢ່າງກວ້າງຂວາງ ຕໍ່ເນື່ອງ ແລະ ຍາວນານ. ພາຍຫຼັງໂຄງການໝົດໄປ ເນື້ອທີ່ເຫຼົ່ານັ້ນຈະຖືກປະປ່ອຍ ຫຼືບໍ່ ກໍເປັນພຽງສວນຊຶ່ງມີຕົ້ນໄມ້ກິນໝາກເຫຼືອຄ້າງຢູ່ຈຳນວນນຶ່ງ. ບໍ່ໄດ້ຮັບຄວາມເອົາໃຈໃສ່ ຈາກເຈົ້າຂອງສວນ ຊຶ່ງໃຫ້ເຫດຜົນວ່າ ຢູ່ໃກ້ບ້ານເກີນໄປ ແລະມີສັດເຂົ້າທຳລາຍຂອງປູກພ້ອມ ດຽວກັນການປູກພືດອາຍຸສັ້ນ ທີ່ບໍ່ມີການຖາງຈູດດິນກ່ອນ ເຮັດໃຫ້ບໍ່ໄດ້ຜົນຜະລິດ.

ການສຶກສານີ້ ພະຍາຍາມຫາວິທີການ ທີ່ແທດເໝາະໃນການຢູ່ຮ່ວມກັນ ຂອງ ແລວຕ້ານເຈື່ອນ, ໄມ້ໃຫ້ໝາກ ແລະພືດອາຍຸສັ້ນ (ເຂົ້າ, ສາລີ, ໝາກເດືອຍ ຫຼື ພືດອື່ນໆ)ໄດ້ຕະລອດໄປ ເນັ້ນຫາຄວາມເປັນໄປໄດ້ໃນການຜະລິດພືດໄຮ່ຄົງທີ່ ໂດຍການປະສົມປະສານກັບ ການອະນຸລັກດິນ ພ້ອມດຽວກັນ ກໍສ້າງຈິດສຳນຶກ ໃນການຍອມຮັບເຕັກນິກວິທີການ ຮູບການຜະລິດຄົງທີ່ ເພື່ອເບິ່ງວ່າຊາວບ້ານຈະໃຫ້ການຍອມຮັບຄືແນວໃດ? ຜັນຂະຫຍາຍ ເຕັກນິກວິຊາການ ອອກສູ່ປະຊາຊົນໃຫ້ກ້ວາງຂວາງຂຶ້ນ ຕອບສະໜອງໄດ້ນະໂຍບາຍ ລຸດຜ່ອນ ແລະ ຢຸດຕິການຖາງປ່າເຮັດໄຮ່ເລື່ອນຍ້າຍ ເທື່ອລະກ້າວ.

ກິດຈະກຳໄດ້ດຳເນີນ ກັບຊາວບ້ານ ຫວ້ຍມະຫາ ເມືອງໂພນໄຊ ແຂວງ ຫຼວງພະບາງ ຈຳນວນ 4 ຄອບຄົວ ຊຶ່ງເລີ້ມມາແຕ່ປີ 2003 ເຖິງ 2005. ຜ່ານການຈັດຕັ້ງປະຕິບັດມາເຫັນວ່າມີ ບົດຮຽນທີ່ເປັນ ທັງໂອກາດ, ຂໍ້ຈຳກັດ ແລະ ສິ່ງທ້າທາຍຊຶ່ງຈະເປັນຂໍ້ ຄວນພິຈາລະນາອັນດີ ໃນຕໍ່ໜ້າ ໃຫ້ແກ່ນັກຄົ້ນຄວ້າ, ນັກສົ່ງເສີມ ແລະຊາວກະສິກອນ ຜູ້ທີ່ສົນໃຈໃນກິດຈະກຳດັ່ງກ່າວ.

### 1.1 ຈຸດປະສົງ

- ✓ ປະເມີນຄວາມອາດສາມາດ ແລະ ຂໍ້ຈຳກັດ ກ່ຽວກັບ ການປູກພືດຄົງທີ່ ແບບປະສົມປະສານ ຢູ່ດິນຄ້ອຍຊັນ ລະຫວ່າງພືດອາຍຸສັ້ນ ກັບໄມ້ຢືນຕົ້ນ ແລະ ແລວຕ້ານເຈື່ອນ.

## II ເອກກະສານທົບທວນ

1/- ສູນສຳຫຼວດແລະແບ່ງເຂດດິນກະສິກຳ ໄດ້ດຳເນີນການທົດລອງກ່ຽວກັບຜົນກະທົບຂອງເຕັກນິກການອະນຸລັກດິນ ຕໍ່ການກັດເຊາະດິນ, ຕໍ່ຜົນຜະລິດພືດ ຮ່ວມກັບອົງການຄົ້ນຄວ້າແລະຄຸ້ມຄອງ ດິນສາກົນ(IBSRAM) ທີ່ສະຖານີ ຫ້ວຍໂຄດ ແຂວງ ຫຼວງພະບາງ ຊຶ່ງ ຜົນຂອງການຄົ້ນຄວ້າ ໄດ້ຊີ້ໃຫ້ເຫັນວ່າ ການຜະລິດໃນພື້ນທີ່ຄ້ອຍຊັນຢ່າງຕໍ່ເນືອງ ຈະເຮັດໃຫ້ມີການເຊາະເຈື່ອນ ດິນຊັ້ນໜ້າຈະຖືກຊະລ້າງ ແລະ ຈະສູນເສັຍຄວາມອຸດົມສົມບູນ. ການປູກເຂົ້າຕາມຫວ່າງຄັນພືດ ປະສົມ

ໄມ້ໃຫ້ໝາກ; ການປູກພືດຕາມຫວ່າງ ຄັນດິນແລະການປູກພືດສະຫຼັບເປັນແຖບ ສາມາດຫຼຸດຜ່ອນປະລິມານຂອງນ້ຳ ໄຫຼບ່າ ແລະ ການສູນ ເສຍດິນໄດ້ເປັນຢ່າດີ ທັງສາມາດຮັກສາລະດັບ ຄວາມອຸດົມສົມບູນຂອງດິນ ແລະ ເພີ້ມຜົນຜະລິດ ພືດ. ຢູ່ ແຂວງ ຫຼວງພະບາງ ການປູກເຂົ້າຕາມຫວ່າງຄັນພືດ ແລະ ການປູກພືດຕາມຫວ່າງຄັນດິນ ມີການສູນເສຍ ດິນໜ້ອຍລົງໃນແຕ່ລະປີ ຄື ຈາກ 3.56 ຕ/ຮຕ ໃນປີ 1994 ມາເປັນ 0.14 ຕ/ຮຕ ໃນປີ 1997 ແລະຈາກ 2.66ຕ/ຮຕ ມາ ເປັນ 0.19 ຕ/ຮຕ ຕາມລຳດັບ. ຮູບການທີ່ມີປະສິດຕິຜົນສູງໃນແງ່ການອະນຸລັກດິນ ແລະການກະສິກຳແບບໝັ້ນຄົງ ແມ່ນ ການປູກພືດສະຫຼັບເປັນແຖບ; ຮູບການປູກເຂົ້າຕາມຫວ່າງຄັນພືດປະສົມໄມ້ໃຫ້ໝາກ ແລະການປູກພືດຕາມຫວ່າງຄັນ ດິນ.

## III ວິທີການ/ອຸປະກອນ

### 3.1 ວິທີການ ອອກແບບການທົດລອງ

ຈຸດທີ່ຕັ້ງຂອງເນື້ອທີ່ ແປງທົດລອງ ແມ່ນ ອີງຕາມເນື້ອທີ່ຕົວຈິງ ຂອງຊາວກະສິກອນ ຊຶ່ງຈະລວມມີທັງບ່ອນຮາບພຽງ ເຖິງ ບ່ອນທີ່ສູງຊັນ ແຕ່ນັ້ນບໍ່ໄດ້ນຳມາເປັນປັດໃຈໃນການປຽບທຽບ. ການກຳນົດຂະນາດແລະຮູບຮ່າງຂອງແປງທົດລອງ ເປັນ ໄປຕາມຄວາມເໝາະສົມຂອງພື້ນທີ່.(ຄື: 60x48ມ ລວມມີ 5 ແລວຕ້ານເຈື່ອນ ມີ 3 ຄອບຄົວ ແລະ ຂະນາດ 48x64ມ ທີ່ ມີ 4 ແລວຕ້ານເຈື່ອນ ມີ 1 ຄອບຄົວ);

ໄລຍະຫ່າງ ຂອງໄມ້ໃຫ້ໝາກ ລະຫວ່າງ ຕົ້ນຕໍ່ຕົ້ນ ແມ່ນ 8 ມ ແຕ່ ຢູ່ 2 ແລວ ຫຼຸ່ມ(ທາງຕີນພູ) ແມ່ນ ສະຫຼັບດ້ວຍໄມ້ ໃຫ້ໝາກຈຳພວກຊົງຜຸ່ມນ້ອຍ (ເຊັ່ນ:ໝາກຂຽບ, ໝາກນາວ) ເຂົ້າໃສ່ ລະຫວ່າງກາງຂອງໄລຍະຫ່າງນັ້ນອີກ ສະແດງວ່າ 2 ແລວນີ້ ມີໄລຍະຫ່າງລະຫວ່າງຕົ້ນ ແມ່ນ 4 ມ. ຂຸມໄມ້ໃຫ້ໝາກ ຈະຢູ່ເບື້ອງເທິງ ຂອງ ແລວຕ້ານເຈື່ອນ ແລະ ຫ່າງອອກໄປ ແລວ 0,5 ແມັດ. ແລວຕ້ານເຈື່ອນແຕ່ລະແລວຫ່າງກັນ 12 ມ.ໂດຍໃຊ້ແກ່ນຖົ່ວຈູບຫວ່ານຕາມເປັນທາງກາງ ແລະ ແກ່ນຖົ່ວສະຕາຍໂລ ຫວ່ານອ້ອມສອງຟາກ (ກວ້າງ 50 ຊຕມ). ຈຳນວນໄມ້ໃຫ້ໝາກຕໍ່ແລວ ຫຼື ຕໍ່ຄອບຄົວຈະຂຶ້ນຢູ່ກັບ ລວງຍາວຂອງແລວຕ້ານເຈື່ອນ.

ພືດອາຍຸສັ້ນ ແມ່ນໝູນວຽນແຕ່ລະປີ ໂດຍມີ: ໝາກເດືອຍ, ສາລີ, ໝາກງາ ແລະ ເຂົ້າໄຮ່ ພ້ອມພືດອື່ນ ຈຳນວນນຶ່ງ (ໂດຍແມ່ນຊາວບ້ານເປັນຜູ້ກຳນົດຕາມຄວາມມັກຕົນ).

### 3.2 ອຸບປະກອນ

ຈຳນວນແນວພັນໄມ້ໃຫ້ໝາກ ທີ່ນຳມາປູກແຕ່ລະຄອບຄົວແມ່ນບໍ່ກຳນົດ ແມ່ນອນທາງດ້ານຊະນິດ ຕໍ່ ຄອບ ຄົວ ບາງຄອບຄົວອາດຈະມີຊະນິດໃດຊະນິດນຶ່ງທີ່ຫຼາຍກວ່າ ໃນຂະນະທີ່ບາງຄອບຄົວອາດໄດ້ຊະນິດນຶ່ງ ຫຼາຍກວ່າ ອີກຄອບຄົວນຶ່ງ. ຊະນິດໄມ້ໃຫ້ໝາກທີ່ນຳມາປູກມີ: ໝາກລິ້ນຈີ່, ລຳໄຍ, ໝາກມີ້, ໝາກພຸກ, ໝາກນາວ; ໝາກຂຽບ.

### 3.3 ວິທີການເກັບແລະວິເຄາະຂໍ້ມູນ

ການຈະເລີນເຕີບໂຕຂອງໄມ້ໃຫ້ໝາກ ແຕ່ລະຊະນິດ ແມ່ນວັດແທກ ໜ້າຕ້າງຄໍຮາກ ແລະ ລວງສູງ ຊຶ່ງມີຫົວໜ່ວຍ ເປັນ (Cm); ເປີເຊັນການລອດຕາຍ ແລະສະພາບຂອງແຕ່ລະຕົ້ນ ແມ່ນໄດ້ບັນທຶກເພື່ອ ຕິດ ຕາມເຖິງການ ປັບໂຕຂອງຕົ້ນໄມ້. ຜົນຜະລິດຂອງພືດອາຍຸສັ້ນແຕ່ລະແນວພັນ ກໍແມ່ນໄດ້ວັດແທກ ໃນເນື້ອທີ່ 2x2ມ ໂດຍແຕ່ລະແນວພັນ ວັດແທກ 3 ຈຸດ

ແລະ ເອົາຜົນສະເລ່ຍມາ ຄິດໄລ່ເປັນຜະລິດຕະພາບ ໂຕນ/ເຮັກຕາ; ແລວຕ້ານເຈື່ອນ ແຕ່ລະແລວ ແມ່ນວັດແທກເອົາລວງສູງ, ການແຜ່ຂະຫຍາຍທາງກວ້າງ ໂດຍແຕ່ລະຈຸດຫ່າງກັນ 10ມ (ຈຸດທີ 10ມ, 20ມ, ໆລໆ) ຊຶ່ງບັນທຶກເປັນຖົ່ວຈູບ ແລະຖົ່ວສະຕາຍໂລ.

## IV ຜົນໄດ້ຮັບ

ຕາຕະລາງ1: ຂໍ້ມູນກ່ຽວກັບຂະໜາດແລະສິ່ງປູກໃນແຕ່ລະປີ:

| ຄອບຄົວ | ຂະໜາດ ແປງ | ຈ/ນ ແລວ | ສະພາບ ເນື້ອທີ່ | ໄມ້ໃຫ້ໝາກ ຕໍ່1ແລວ | ພືດອາຍຸສັ້ນ | |
|---|---|---|---|---|---|---|
| | | | | | ປີ 2003 | ປີ 2004 |
| ທ ຢາເຊັ້ງ | 48x64 | 4 | ເນີນ 10% | 8 | ໝາກເດືອຍ, ໝາກງາ, ມັນດ້າງ | ໝາກເດືອຍ, ສາລີ; ໝາກງາ, ມັນດ້າງ |
| ທ ບົວຮີ | 60x48 | 5 | ສູງຊັນ 60% | 6 | ໝາກເດືອຍ, ສາລີ | ໝາກເດືອຍ, ໝາກງາ, ມັນດ້າງ, ມັນຕົ້ນ |
| ທ ໂລ້/ບີ | 60x48 | 5 | ສູງຊັນ 30% | 6 | ໝາກເດືອຍ, ເຂົ້າ; ໝາກງາ | ບໍ່ປູກຫຍັງ (ຂາຍດິນໃຫ້ທ້າວບີ) |
| ທ ທອງສີ | 60x48 | 5 | ຮາບພຽງ | 6 | ເຂົ້າ | ເຂົ້າ |

ຕາຕະລາງ 2: ສັງລວມຜົນຜະລິດຂອງພືດອາຍຸສັ້ນ

| ຄອບຄົວ | ປີທີ | ພືດທີ່ປູກ ຕົ້ນຕໍ | ເນື້ອທີ່ປູກ (ມ2) | ໃຊ້ແນວພັນ (ກລ) | ຜົນຜະລິດ(ກລ) | ຜະລິດຕະພາບ (ກລ/ຮຕ) | ໝາຍເຫດ |
|---|---|---|---|---|---|---|---|
| ຢາເຊັ້ງ | 1 | ໝາກເດືອຍ | 3000 | 3 | 400 | 1300 | |
| | 1 | ໝາກງາ | 720 | 0.2 | 20 | 278 | |
| | 2 | ໝາກເດືອຍ | 1400 | 1 | 120 | 857 | |
| | 2 | ສາລີ | 1400 | 1 | 100 | 714 | |
| | 2 | ໝາກງາ | 700 | 0.2 | 15 | 214 | ປູກກ້ອງໝາກ ເດືອຍແລະສາລີ |
| ບົວຮີ | 1 | ສາລີ | 800 | 1.0 | 300 | 3700 | |
| | 1 | ໝາກດືອຍ | 2000 | 2 | 280 | 1400 | |
| | 2 | ໝາກເດືອຍ | 2800 | 2 | 100 | 357 | |
| | 2 | ໝາກງາ | 400 | 0.1 | 8 | 200 | ປູກກ້ອງໝາກ ເດືອຍ |
| ບີ | 1 | ເຂົ້າໄຮ່ | 1100 | 6 | 120 | 1000 | ປີທີ 2 ບໍ່ປູກຫຍັງ |
| | 1 | ໝາກດືອຍ | 1700 | 1.5 | 200 | 1170 | |
| | 1 | ໝາກງາ | 100 | _ | 4 | 400 | ໃຊ້ແນວໜ້ອຍ |
| ທອງສີງ | 1 | ເຂົ້າ | 2880 | 16 | 370 | 1280 | ປູກເຕັມເນື້ອທີ່ |
| | 2 | ເຂົ້າ | 2880 | 14 | 300 | 1040 | |

***ສະຫຼຸບຕາຕະລາງ:***

*ເມື່ອສັງເກດເບິ່ງຜົນຜະລິດ ຫຼື ຜະລິດຕະພາບຂອງພືດທີ່ປູກເຫັນວ່າ ໂດຍລວມແລ້ວ ໃນປີທີ 1 ຄ່າສະເລ່ຍ ຜະລິດຕະພາບແມ່ນຢູ່ໃນເກນປົກກະຕິ ຂອງຜະລິດຕະພາບພືດສະເລ່ຍທົ່ວເມືອງ (ໝາກເດືອຍ,ສາລີ,ເຂົ້າ:1,5-2, 4-5 ແລະ 1,3 ໂຕນ/ຮຕ ຕາມລຳດັບ); ແຕ່ປີທີ 2 ແມ່ນມີຄວາມແຕກຕ່າງ ຈາກ ເກນປົກກະຕິຫຼາຍ ສາເຫດຕົ້ນຕໍ ແມ່ນພືດທີ່ປູກໄດ້ຖືກທຳລາຍ ຈາກ ສັດລ້ຽງທີ່ປ່ອຍຊະຊາຍ.ປີທີ 3 ມີນຶ່ງຄອບຄົວທີ່ສືບຕໍ່ປູກດ້ວຍຖົ່ວເຫຼືອງ ແຕ່ບໍ່ໄດ້ເກັບຂໍ້ມູນ ເພາະໄດ້ເກີດຄວາມເສັຍຫາຍກັບພືດທີ່ປູກ ເຊັ່ນກັນ.*

ຕາຕະລາງ 3: ການເຕີບໂຕໂດຍສະເລ່ຍຂອງໄມ້ໃຫ້ໝາກແຕ່ລະຊະນິດ

| ຕົວວັດແທກ | ຊະນິດໝາກໄມ້ (Fruit trees species) | | | | | |
|---|---|---|---|---|---|---|
| Parameter | ລິ້ນຈີ່ | ລຳໄຍ | ໝາກພຸກ | ໝາກມີ້ | ໝາກຂຽບ | ໝາກນາວ |
| ເປີເຊັນລອດຕາຍ | 66.7 | 74.1 | 64.3 | 69.2 | 66.7 | 62.5 |
| ລວງສູງ(Cm) | 120.3 | 109.7 | 153.1 | 247.5 | 106.2 | 78.9 |
| ໜ້າຕ້າງຄໍຮາກ(Cm) | 2.8 | 2.1 | 3.7 | 5.4 | 2.3 | 2.0 |
| ການແຕກຫງ່າ | 2.2 | 1.6 | 3.8 | 5.0 | 3.3 | 2.3 |
| ສະພາບຕົ້ນໄມ້ | 2.8 | 2.4 | 3.0 | 3.0 | 1.3 | 2.5 |

*ສະຫຼຸບ: ສັງເກດເຫັນວ່າໄມ້ໃຫ້ໝາກແຕ່ລະຊະນິດມີການເຕີບໂຕໃນລະດັບດີ ຊຶ່ງ ນັບແຕ່ມື້ເລີ້ມການປູກເດືອນ 6/2003 ລວງສູງສະເລ່ຍຂອງ ເບ້ຍລີ້ນຈີ່, ລຳໄຍ, ໝາກພຸກ, ໝາກມີ້, ໝາກຂຽບ ແລະໝາກນາວ ຈະມີພຽງ 50,50,55,60,30,30 ຊຕມ ຕາມລຳດັບ.ໝາກນາວສ່ວນໃຫຍ່ຈະມີບົ້ງກັດໃບເຮັດໃຫ້ເຕີບໂຕຊ້າ. ສະພາບຂອງຕົ້ນໄມ້ ຢູ່ໃນເກນທີ່ດີ ຍົກເວັ້ນໝາກນາວ ທີ່ສ່ວນໃຫ່ຍຈະຍັງເປັນຄືເບ້ຍເດີມ ມີກິ່ງງ່ານ້ອຍຫຼາຍ ຍ້ອນການທຳລາຍ ຂອງບົ້ງ.*

ຕາຕະລາງ 4: ສະພາບການຂະຫຍາຍຕົວຂອງພືດແລວຕ້ານເຈື່ອນ

| ສະເລ່ຍການຂະຫຍາຍຕົວຂອງພືດໃນແລວຕ້ານເຈື່ອນ | | | | | | | | |
|---|---|---|---|---|---|---|---|---|
| | ຄອບຄົວ | Hc | Wc | Cc | Hs | Ws | Cs | ໝາຍເຫດ |
| | 1 | 162 | | 3 | 58 | 46 | 2.3 | |
| | 2 | 186 | | 3 | 61 | 43 | 2.1 | |
| | 3 | 151 | | 2 | 48 | 34 | 2.4 | |
| | 4 | | | | | | | ບໍ່ມີແລວ |
| | ສະເລ່ຍ | 166.3 | | 2.6 | 55.7 | 41.0 | 2.3 | |

*ໝາຍເຫດ: C- ຖົ່ວຈູບ; S-ຖົ່ວສະຕາຍໂລ, H- ລວງສູງ; W- ຂະນາດກວ້າງຂອງແລວ (ທີ່ມີການຂະຫຍາຍຕົວອອກ);*
*C- ສະພາບຂອງພືດ:1- ການເຕີບໂຕບໍ່ດີ ບໍ່ມີການຂະຫຍາຍ, 2- ມີການເຕີບໂຕດີ ແຕ່ງມີຫຼາຍບ່ອນ ທີ່ແລວຖືກສູນຫາຍໄປ 3- ແລວຍັງມີສະພາຍສົມບູນດີຫຼາຍ ມີການເຕີບໂຕ ແລະຂະຫຍາຍອອກຢ່າງໜາແໜ້ນ.*
*ຕົ້ນຖົ່ວຈູບໃຫຍ່ສູງດີ ແລະມີປະລິມານແກ່ນທີ່ຫຼົ່ນລົງດິນເກີດເປັນເບ້ຍຢູ່ທົ່ວໄປໃນເນື້ອທີ່. ຖົ່ວສະຕາຍໂລເບິ່ງໂດຍລວມເຫັນວ່າສາມາດຂະຫຍາຍຕົວໄດ້ດີເຊັ່ນກັນ ແຕ່ສ່ວນຫຼາຍ ມັນຈະຖືກຖາງຖິ້ມ ຍ້ອນຊາວບ້ານເຫັນວ່າມັນ ແຜ່ລາມອອກໄປກວມເອົາເນື້ອທີ່ປູກພືດ, ຊາວບ້ານຍັງບໍ່ສົນໃຈທີ່ຈະນຳໃຊ້ຢ່າງຈິງຈັງ.*

ຕາຕະລາງ 5: ສັງລວມການລົງທຶນສຳລັບເບ້ຍໄມ້ໃຫ້ໝາກ

| | ຈຳນວນ ເບ້ຍໄມ້ ແຕ່ລະຄອບຄົວ | | | |
|---|---|---|---|---|
| ຊະນິດ | 1 | 2 | 3 | 4 |
| ໝາກມີ້ ແລະ ໝາກຂຽບ | 14 | 10 | 10 | 0 |
| ລາຄາ ກີບ/ເບ້ຍ | 3000 | 3000 | 3000 | |
| ເປັນເງິນ(ກີບ) | 42.000 | 30.000 | 30.000 | |
| ລີ້ນຈີ່,ລຳໄຍ,ໝາກພຸກ,ໝາກນາວ | 32 | 30 | 30 | 40 |
| ລາຄາ ກີບ/ເບ້ຍ | 5000 | 5000 | 5000 | 5000 |
| ເປັນເງິນ(ກີບ) | 160.000 | 150.000 | 150.000 | 200.000 |
| ລວມແຕ່ລະຄອບຄົວ | 202.000 | 180.000 | 180.000 | 200.000 |

## IV ບົດຮຽນ ແລະປະສົບການ

### 4.1- ທັດສະນະ/ ຄວາມຄິດເຫັນຂອງຄອບຄົວຕໍ່ກັບເຕັກນິກໂດຍລວມ:

ໄມ້ໃຫ້ໝາກທຸກຊະນິດແມ່ນມີຄວາມສຳຄັນເທົ່າກັນ ແລະ ເປັນການດີ ທີ່ຈະມີຫຼາຍແນວ ໄວ້ໃນເນື້ອທີ່; ໄລຍະຂອງ ແລວຕ້ານເຈື່ອນຂ້ອນຂ້າງຖີ່(ໃນບ່ອນອ່າວພຽງ) ຊຶ່ງພາໃຫ້ເສຍເນື້ອທີ່ປູກພືດ ແລະເປືອງແຮງງານ ໃນການດູແລຮັກສາ; ພືດໃນແລວຕ້ານເຈື່ອນບໍ່ໄດ້ຖືກນຳໄປໃຊ້(ບໍ່ມີສັດຈະໃຫ້ກິນ), ມັນກໍແຜ່ລາມອອກຫຸ້ມ ບ່ອນປູກພືດອາຍຸສັ້ນ (ມີບາງບ່ອນຕ້ອງໄດ້ຖາງຖິ້ມ),ຮອດປີທີ 2 ຖົ່ວຈູບເກີດຂຶ້ນເອງເຕັມເນື້ອທີ່ ຄິດວ່າຈະດີ ເພາະເນື້ອທີ່ກາຍເປັນປ່າເລົ່າຄືນໄດ້ໄວຂຶ້ນ.

### 4.2- ທັດສະນະຂອງວິຊາການ

ຮູບແບບ ທີ່ນຳມາໃຊ້ ແມ່ນໄດ້ຜ່ານການທົດສອບນຳໃຊ້ໃນສະຖານີ ຊຶ່ງເຫັນວ່າແມ່ນການນຳໃຊ້ດິນທີ່ມີ ການປະສົມປະສານລະຫວ່າງລະບົບການປູກພືດຄົງທີ່ ແລະ ການອະນຸລັດດິນ, ນ້ຳ ທີ່ປະສິດຕິຜົນສູງ, ແຕ່ໃນການນຳມາໃຊ້ກັບພື້ນທີ່ຊາວກະສິກອນນັ້ນ ຊາວບ້ານຍັງບໍ່ທັນມີຄວາມກະຕືລືລົ້ນ ຫຼືໃຫ້ຄວາມສົນໃຈກັບ ຮູບແບບການຜະລິດແບບດັ່ງກ່າວ ສ່ວນໃຫຍ່ເຂົາເຈົ້າຫວັງພຽງມີສວນໄມ້ໃຫ້ໝາກໄວ້ໃກ້ໆກັບບ້ານເທົ່ານັ້ນ. ການທີ່ຈະນຳໃຊ້ຮູບແບບການຜະລິດດັ່ງກ່າວນີ້ ຄວນຕ້ອງເປັນຄອບຄົວທີ່ມີບັນຫາທີ່ແທ້ຈິງ ກັບເນື້ອທີ່ ທຳການຜະລິດ, ສາມາດໃຫ້ຄວາມສຳຄັນກັບທຸກປະເພດພືດທີ່ປູກ (ພືດແລວຕ້ານເຈື່ອນ); ເປັນເຂດທີ່ສາມາດ ຈັດການກັບສັດລ້ຽງທີ່ຍັງປ່ອຍຊະຊາຍຢູ່ ແລະ ສາມາດຄວບຄຸມການ ເກີດໄຟໄໝ້ລາມໄດ້;

## V ຂໍ້ສະຫຼຸບ

ຜົນຈາກການຕິດຕາມເກັບກຳ ວັດແທກຂໍ້ມູນ ຊຶ່ງຢັ້ງຢືນເຖິງຄວາມເປັນໄປໄດ້ ແລະ ການຍອມຮັບຂອງ ຊາວກະສິກອນໄດ້ສະແດງໃຫ້ເຫັນວ່າ ພືດ ທີ່ເປັນອົງປະກອບຂອງການທົດລອງ ມີການຂະຫຍາຍຕົວ ແລະ ໃຫ້ຜົນຜະລິດໄດ້ ໃນລະ ດັບເກນທີ່ດີ(ໃນປີທີນຶ່ງ); ການທີ່ຜົນຜະລິດພືດທັງໝົດຕົກລົງໃນປີທີ 2 ນັ້ນ ສາເຫດຕົ້ນຕໍແມ່ນເກີດມາ ຈາກຄວາມເອົາໃຈໃສ່ຂອງຄອບຄົວທັງໝົດບໍ່ດີເທົ່າທີ່ຄວນ(ປ່ອຍໃຫ້ສັດເຂົ້າທຳລາຍ);

ຮູບແບບການຜະລິດດັ່ງກ່າວນີ້ ຍັງສາມາດທີ່ຈະຕ້ອງສືບຕໍ່ທົດສອບນໍາໃຊ້ໄດ້ອີກ ແຕ່ຄວນຈະຕ້ອງປັບປຸງ ທາງດ້ານ ຮູບແບບ(Methodology) ບາງຢ່າງ ເຊັ່ນ: ຕ້ອງຄໍານຶງເຖິງ ການຄັດເລືອກຄອບຄົວ(ເຜົ່າຊົນ, ຂໍ້ຈໍາກັດດ້ານເນື້ອທີ່ດິນ, ແຮງງານ); ຄວາມແຫດເໝາະຂອງພື້ນທີ່ ເປັນຕົ້ນ.